# ໂອກາດພົບປະຈີນໃນງານວາງສະແດງສິນຄ້າຈີນ-ອາຊີໃຕ້

ງານວາງສະແດງສິນຄ້າຈີນ-ອາຊີໃຕ້ຄັ້ງທີ 9 ໄດ້ຈັດຂຶ້ນຢູ່ນະຄອນຄຸນໝິງ ແຂວງຢຸນນານ ສປ ຈີນ ຢ່າງສຳເລັດຜົນໃນລະຫວ່າງວັນທີ 19 ຫາ 24 ມິຖຸນາ 2025 ຜ່ານມາ. ປີນີ້, ມີວິສາຫະກິດລາວ 25 ແຫ່ງ ແລະ ມີຮ້ານວາງສະແດງສິນຄ້າຢູ່ 46 ຮ້ານ ໃນງານວາງສະແດງຄັ້ງນີ້ ໂດຍມີຊາພັນປີທີ່ມີກິ່ນຫອມຫວນ, ລະບົບຈໍລະຈອນສິນຄ້າອັດສະລິຍະ ແລະ ວິທະຍາສາດເຕັກໂນໂລຊີພະລັງງານໄຟຟ້າທີ່ທັນສະໄໝ, ນັກທຸລະກິດທີ່ມາເຂົ້າຮ່ວມງານວາງສະແດງຈາກລາວ ໄດ້ພິສູດດ້ວຍປະສົບການຂອງຕົນວ່າ: ໃນຍຸກທີ່ເຕັມໄປດ້ວຍສິ່ງທ້າທາຍ, ການເປີດປະຕູສູ່ພາຍນອກຂອງຈີນໄດ້ສ້າງໂອກາດພັດທະນາອັນມະຫາສານໃຫ້ແກ່ບັນດາປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້.

## ງານວາງສະແດງສິນຄ້າຈີນ-ອາຊີໃຕ້ເປັນຂົວເຊື່ອມຕໍ່ຕະຫຼາດຈີນ

ໃນຫໍວາງສະແດງທີ່ມີບັນຍາກາດຄຶກຄື້ນຂອງງານວາງສະແດງຄັ້ງນີ້, ຮ້ານວາງສະແດງຂອງບໍລິສັດການຄ້າຂາເຂົ້າ-ຂາອອກ MPS ລົງທຶນຝ່າຍດຽວ ຈຳກັດ ໄດ້ວາງສະແດງນ້ຳມັນໂອລີບ, ສະບູດອກໄມ້ສົດ, ກາເຟ. ທ່ານ ລິງໄຮທິງ ເຈົ້າຂອງຮ້ານວາງສະແດງດັ່ງກ່າວໄດ້ມາເຂົ້າຮ່ວມງານວາງສະແດງສິນຄ້າຈີນ-ອາຊີໃຕ້ ຫຼາຍຄັ້ງແລ້ວ ໂດຍໄດ້ເປັນສັກຂີພິຍານໃຫ້ເຫັນຜະລິດຕະພັນຂອງບໍລິສັດຕົນໄດ້ເພີ່ມຂຶ້ນຈາກໃບຊາໃນເບື້ອງຕົ້ນມາເປັນເຄື່ອງໃຊ້ປະຈຳວັນ ແລະ ອາຫານການກິນທີ່ມີຫຼາກຫຼາຍຊະນິດ. ທ່ານກ່າວວ່າ: "ງານວາງສະແດງສິນຄ້າຈີນ-ອາຊີໃຕ້ເປັນຂົວເຊື່ອມຕໍ່ລະຫວ່າງສິນຄ້າລາວ ແລະ ຕະຫຼາດຈີນ, ພວກເຮົາມາເຂົ້າຮ່ວມງານວາງສະແດງທຸກເທື່ອ, ລ້ວນແຕ່ໄດ້ຮັບຄວາມນິຍົມ ແລະ ຄວາມສົນໃຈຈາກລູກຄ້າຈີນເພີ່ມຂຶ້ນ."

ຢູ່ຂ້າງຮ້ານວາງສະແດງຂອງທ່ານ ລິງໄຮທິງ, ມີລູກຄ້າຫຼາຍຄົນມາຊີມນ້ຳຊາຢູ່ຕາມຮ້ານວາງສະແດງຊາພັນປີຂອງບໍລິສັດ Meely. ລູກຄ້າຜູ້ໜຶ່ງຍ້ອງວ່າ: "ລົດຊາດຊາພັນປີເໝືອນດັ່ງຊາຜູເອີຂອງຢຸນນານ!" ທ່ານອາຫຼຽນ ຫົວໜ້າພະແນກໃບຊາຂອງບໍລິສັດມາຈາກແຂວງຜົ້ງສາລີ, ຄອບຄົວຂອງທ່ານໄດ້ຜະລິດຊາມາເປັນເວລາ 20 ກວ່າປີແລ້ວ.

ທ່ານ ອາຫຼຽນ ເຄີຍມາເຂົ້າຮ່ວມງານວາງສະແດງສິນຄ້າຈີນ-ອາຊີໃຕ້ ແລະ ງານປະເພດອື່ນໆຢູ່ນະຄອນຄຸນໝິງ 20 ກວ່າເທື່ອແລ້ວໂດຍໄດ້ຮັບຮູ້ເຖິງຂະບວນການທີ່ງານວາງສະແດງສິນຄ້າຈີນ-ອາຊີໃຕ້ກາຍເປັນເວທີສຳຄັນແຫ່ງການຮ່ວມມືພາກພື້ນ. ປີນີ້, ທ່ານໄດ້ນຳເອົາຊາແດງ, ຊາຜູເອີ ແລະ ຊາຂາວທີ່ຄົ້ນຄວ້າຜະລິດເພື່ອມາວາງສະແດງຢູ່ຕະຫຼາດຈີນສະເພາະ, ປີກາຍນີ້, ປະລິມານການຜະລິດຊາຂາວຂອງບໍລິສັດດັ່ງກ່າວມີຫຼາຍກວ່າ 20 ໂຕນແລ້ວ. ພາຍຫຼັງເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ, ທ່ານໄດ້ເດີນທາງລະຫວ່າງປະເທດລາວ ແລະ ຈີນເລື້ອຍໆ ເພື່ອນຳເອົາຊາລາວເຂົ້າມາຈຳໜ່າຍຢູ່ຈີນ, ປັດຈຸບັນ ລາວໄດ້ຈຳໜ່າຍຊາຢູ່ປະມານ 30 ແຂວງຂອງຈີນ.

ທ່ານ ອາຫຼຽນ ເຄີຍໄດ້ເຂົ້າຮ່ວມງານ ກິດຈະກຳວັດທະນະທຳຊາຂອງຈີນ ເລື້ອຍໆ ຕາມການເຊື້ອເຊີນ ແລະ ໄດ້ແລກປ່ຽນສີມືຜະລິດຊາກັບເພື່ອນມິດ. ປັດຈຸບັນ, ນັກທຸລະກິດຈີນໄດ້ຮັບຮູ້ເຖິງວັດທະນະທຳລາວ ໂດຍຜ່ານຊາຂອງລາວ, ຈີນເຖິງຂັ້ນມີຫຼາຍຄົນໄປລົງທຶນຢູ່ລາວ; ຊາວໜຸ່ມລາວກໍເລີ່ມຮຽນຮູ້ສີມືຊົງຊາຂອງຈີນ ເຊິ່ງເຮັດໃຫ້ວັດທະນະທຳຊາຂອງສອງປະເທດໄດ້ເຊື່ອມໂຍງເຂົ້າກັນນັບມື້ນັບຫຼາຍຂຶ້ນ.

## ຮ່ວມມືກັບປະເທດຕ່າງໆນັບມື້ນັບຫຼາຍຂຶ້ນໂດຍຜ່ານງານວາງສະແດງສິນຄ້າຈີນ-ອາຊີໃຕ້

ຢູ່ເຂດວາງສະແດງວຽງຈັນໂລຊິດສະຕິກ ໃນງານວາງສະແດງສິນຄ້າຈີນ-ອາຊີໃຕ້, ໜ້າຈໍ LED ພວມໄດ້ສາຍສະພາບການຈໍລະຈອນສິນຄ້າຢູ່ຕາມທ່າບົກທ່ານາແລ້ງຂອງນະຄອນຫຼວງວຽງຈັນ. ຄຽງຄູ່ກັບການເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນຢ່າງເປັນທາງການ, ໂຄງການວຽງຈັນໂລຊິດສະຕິກໄດ້ເລີ່ມລົງມືກໍ່ສ້າງ, ປັດຈຸບັນ, ໄດ້ກາຍເປັນສູນການຄ້າ ແລະ ຖານການຜະລິດອຸດສາຫະກຳທີ່ຈະເລີນໃໝ່ຂອງປະເທດລາວ.

ປີນີ້ແມ່ນວຽງຈັນໂລຊິດສະຕິກມາເຂົ້າຮ່ວມງານວາງສະແດງເປັນປີທີ 2, ປີກາຍນີ້ກໍມີວິສາຫະກິດຈີນຫຼາຍແຫ່ງມີຈຸດປະສົງຮ່ວມມືກັບສວນດັ່ງກ່າວ. ໃນມື້ເປີດງານວາງສະແດງສິນຄ້າຈີນ-ອາຊີໃຕ້ປີນີ້, ບໍລິສັດທ່າບົກທ່ານາແລ້ງລົງທຶນຝ່າຍດຽວຈຳກັດໄດ້ເຊັນສັນຍາຮ່ວມມືກັບບໍລິສັດທ່າບົກອານນິງສາກົນຈຳກັດ. ທ່ານ ນາງ ມະນີນາ ຜູ້ຮັບຜິດຊອບການຕະຫຼາດຂອງວຽງຈັນໂລຊິດສະຕິກດັ່ງກ່າວກ່າວວ່າ: ປະລິມານການຂົນສົ່ງຕູ້ຄອນເທນເນີຂອງບໍລິສັດຕົນຈະເພີ່ມຂຶ້ນຈາກ 250.000 ຕູ້ໃນປີ 2024 ເປັນ 300.000 ຕູ້ໃນປີ 2025.

ທ່ານ ນາງ ມະນີນາ ກ່າວຕື່ມອີກວ່າ: "ພວກເຮົາຈະຮ່ວມມືກັບປະເທດຕ່າງໆນັບມື້ນັບຫຼາຍຂຶ້ນ ໂດຍຜ່ານງານວາງສະແດງສິນຄ້າຈີນ-ອາຊີໃຕ້ ເພື່ອຊຸກຍູ້ການພັດທະນາຂະແໜງການໂລຊິດສະຕິກຂອງລາວ."

ທ່ານ ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວກ່າວວ່າ: "ງານວາງສະແດງສິນຄ້າຈີນ-ອາຊີໃຕ້ ໄດ້ສ້າງໂອກາດແລກປ່ຽນໃນຂົງເຂດເສດຖະກິດການຄ້າ, ການລົງທຶນ, ການຮ່ວມມືກັນດຳເນີນທຸລະກິດ ແລະ ການເຊື່ອມຕໍ່ດ້ານຕະຫຼາດໃຫ້ແກ່ວິສາຫະກິດປະເທດຕ່າງໆ ເຊິ່ງຈະຊຸກຍູ້ການສ້າງການພົວພັນໄວ້ເນື້ອເຊື່ອໃຈກັນ ແລະ ມິດຕະພາບລະຫວ່າງປະເທດຕ່າງໆ ແລະ ຊ່ວຍຊຸກຍູ້ລັດຖະບານ ແລະ ວິສາຫະກິດປະເທດຕ່າງໆຮ່ວມກັນສ້າງອະນາຄົດທີ່ດີງາມຢ່າງຕໍ່ເນື່ອງ."

## ໄດ້ຮັບຮູ້ວ່າຈະເຝົ້າຮັກສາບ້ານເມືອງສີຂຽວດ້ວຍວິທະຍາສາດເຕັກໂນໂລຊີເປັນຄືແນວໃດ

ໃນຫໍວາງສະແດງພະລັງງານສີຂຽວໃນງານວາງສະແດງສິນຄ້າຈີນ-ອາຊີໃຕ້, ນາງ ເທບມຸກດາ ເພັດຊະລາດ ທີ່ເກີດໃນຊຸມປີ 1990 ຈາກລາວ ໄດ້ຄົ້ນຄວ້າຜົນງານວິທະຍາສາດເຕັກໂນໂລຊີພະລັງງານໄຟຟ້າຢ່າງຕັ້ງໜ້າ. ໃນຖານະເປັນພະນັກງານຂອງບໍລິສັດລົງທຶນພະລັງງານໄຟຟ້າລາວ-ຈີນ ຈຳກັດ ທີ່ຂຶ້ນກັບບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ພະລັງງານສາກົນຈຳກັດ, ນາງໄດ້ເປັນສັກຂີພິຍານໃຫ້ແກ່ການຊຸກຍູ້ການຮ່ວມມືດ້ານພະລັງງານໄຟຟ້າຂອງພາກພື້ນດ້ວຍວິທະຍາສາດເຕັກໂນໂລຊີເປັນຄືແນວໃດ.

ໃນຫໍວາງສະແດງ, ນາງໄດ້ເຫັນອຸປະກອນທີ່ຄຸ້ນເຄີຍຕ່າງໆ ເຊັ່ນ: ຫຸ່ນຍົນລາດຕະເວນກວດກາອັດສະລິຍະ, ລະບົບຕິດຕາມຄວບຄຸມທາງໄກ ແລະ ອື່ນໆ. ນາງເວົ້າວ່າ: "ເຕັກນິກລາດຕະເວນກວດກາດ້ວຍເຮືອບິນບໍ່ມີຄົນຂັບໄດ້ຖືກນຳໃຊ້ຢູ່ປະເທດລາວແລ້ວ ເຊິ່ງໄດ້ຍົກປະສິດທິພາບ ແລະ ຄວາມປອດໄພໃນການກວດກາຄວາມຕິດຂັດຕາມສາຍສົ່ງໄຟຟ້າໃຫ້ສູງຂຶ້ນ." ນາງໄດ້ເອົາໃຈໃສ່ຮູບຈຳລອງກະແສໄຟຟ້າທີ່ເບິ່ງເຫັນໄດ້ເປັນພິເສດ ແລະ ເຫັນວ່າ: ເຕັກໂນໂລຊີດ້ານພະລັງງານໄຟຟ້າເຫຼົ່ານີ້ ໄດ້ຮັດແໜ້ນສາຍພົວພັນລະຫວ່າງບັນດາປະເທດໃນອະນຸພາກພື້ນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງຕື່ມອີກ.

ນາງກ່າວວ່າ: ໂຄງການເຊື່ອມຕໍ່ສາຍສົ່ງໄຟຟ້າ 500 ກິໂລໂວນລາວ-ຈີນທີ່ພວມກໍ່ສ້າງຢູ່ ຈະກາຍເປັນ "ເສັ້ນທາງດ່ວນພິເສດ" ດ້ານພະລັງງານສະອາດຂອງລາວ ແລະ ຄາດວ່າຈະສ້າງສຳເລັດໃນປີ 2026. ເມື່ອຮອດເວລານັ້ນ, ພະລັງງານໄຟຟ້າ ທີ່ຜະລິດດ້ວຍພະລັງງານນ້ຳ, ພະລັງງານລົມ ແລະ ພະລັງງານແສງຕາເວັນທີ່ອຸດົມສົມບູນຂອງລາວ ຈະຖືກສົ່ງໄປປະເທດຕ່າງໆນັບມື້ນັບຫຼາຍ ແລະ ຊ່ວຍຊຸກຍູ້ການພັດທະນາແບບສີຂຽວຂອງພາກພື້ນ.

ນາງ ກ່າວຕື່ມວ່າ: "ງານວາງສະແດງສິນຄ້າຈີນ-ອາຊີໃຕ້ໄດ້ເຮັດໃຫ້ຂ້າພະເຈົ້າຮັບຮູ້ເຖິງຈີນເຝົ້າຮັກສາບ້ານເມືອງສີຂຽວດ້ວຍວິທະຍາສາດເຕັກໂນໂລຊີເປັນຄືແນວໃດ." ນາງເຊື່ອໝັ້ນວ່າ, ປະເທດລາວກໍຈະສາມາດຄົ້ນພົບຈຸດດຸນດ່ຽງລະຫວ່າງວິທະຍາສາດເຕັກໂນໂລຊີກັບການອະນຸລັກສິ່ງແວດລ້ອມນິເວດ. ໃນຖານະເປັນ "ທູດພະລັງງານໄຟຟ້າ", ນາງຫວັງວ່າ: ຈະສາມາດເຜີຍແຜ່ແນວຄວາມຄິດການພັດທະນາສີຂຽວດ້ວຍການເລົ່າເລື່ອງລາວການຮ່ວມມືລະຫວ່າງລາວ ແລະ ຈີນເພື່ອເພີ່ມພະລັງຂັບເຄື່ອນເຂົ້າໃນການຮ່ວມກັນສ້າງອະນາຄົດສີຂຽວ.




**ເນື້ອໃນເພີ່ມເຕີມ:**

ງານວາງສະແດງສິນຄ້າຈີນ-ອາຊີໃຕ້ເປັນເວທີສາກົນສຳຄັນສຳລັບຈີນ ແລະ ບັນດາປະເທດອາຊີໃຕ້ ລົງເລິກການຮ່ວມມືດ້ານເສດຖະກິດການຄ້າ ແລະ ຊຸກຍູ້ການແລກປ່ຽນດ້ານວັດທະນະທຳ ແລະ ໄດ້ຈັດຂຶ້ນເປັນຄັ້ງທີ 9 ແລ້ວ ນັບແຕ່ປີ 2013 ເປັນຕົ້ນມາ.

ງານວາງສະແດງສິນຄ້າຈີນ-ອາຊີໃຕ້ຄັ້ງທີ 9 ໄດ້ຈັດຕັ້ງຫໍວາງສະແດງຫົວຂໍ້ສະເພາະ 16 ແຫ່ງ ເຊິ່ງໄດ້ດຶງດູດວິສາຫະກິດຈາກຈີນ ແລະ ອີກ 73 ປະເທດ ແລະເຂດແຄວ້ນມາເຂົ້າຮ່ວມງານວາງສະແດງ. ນັບມາຮອດເວລາ 12 ໂມງຂອງວັນທີ 24 ມິຖຸນາຜ່ານມາ, ງານວາງສະແດງສິນຄ້າຄັ້ງນີ້ໄດ້ເຊັນສັນຍາການຄ້າຕົວຈິງ 153 ສະບັບ, ມູນຄ່າໃນສັນຍາການຄ້າກັບຕ່າງປະເທດໄດ້ບັນລຸເຖິງ 8,479 ຕື້ຢວນ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)



ynzhanba@163.com
laos.yunnangateway.com